ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---------

<u>ທະນາຄານແຫ່ງ ສປປ ລາວ.</u>

/ເລກທີ ..../ທຫລ

# ຂໍ້ກຳນົດ ວ່າດ້ວຍ
## ນະໂຍບາຍສິນເຊື່ອ ຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນ ແກ່ລະດັບຜູ້ບໍລິຫານ ແລະ ບຸກຄົນທີ່ມີການພົວພັນກັບສິນເຊື່ອ.

---------------

- ອີງຕາມມາດຕາ 5 ຂອງກົດໝາຍ ວ່າດ້ວຍທະນາຄານ ແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ ລົງວັນທີ 14 ຕຸລາ 1995.
- ອີງຕາມມາດຕາ 5, 14 ແລະ 15 ຂອງ ດຳລັດວ່າດ້ວຍການຄຸ້ມຄອງການເຄື່ອນໄຫວ ຂອງ ທະນາຄານ ທຸລະກິດ ແລະ ສະຖາບັນກູ້ຢືມເງິນ ສະບັບເລກທີ 03/ນຍ ລົງວັນທີ 23 ມັງກອນ 1992.
- ອີງຕາມການເຫັນດີ ຂອງສະພາບໍລິຫານ ທະນາຄານແຫ່ງ ສປປ ລາວ ຄັ້ງວັນທີ 9 /1/1996

### ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ອອກຂໍ້ກຳນົດ:

**ມາດຕາ 1.** ປະທານ, ຮອງປະທານ, ສະມາຊິກສະພາຄຸ້ມຄອງ ແລະ ຄະນະອຳນວຍການ ຂອງ ທະນາຄານທຸລະກິດ ຫລື ສະຖາບັນການເງິນ ແລະ ຜູ້ຖືຮຸ້ນລາຍໃຫຍ່ເກີນກວ່າ 10% ຂອງຈຳນວນຮຸ້ນທັງໝົດ ຂອງ ທະນາຄານທຸລະກິດ ບໍ່ມີສິດກູ້ຢືມເງິນ ນຳທະນາຄານ ທຸລະກິດ ຫລື ສະຖາບັນການເງິນຂອງຕົນເອງ, ຫລື ໃຫ້ອົງການນີ້ ຄ້ຳປະກັນແກ່ຕົນເອງ ເພື່ອກູ້ຢືມເງິນ ນຳຜູ້ອື່ນ ຫລື ນຳໃຊ້ສິດອຳນາດ ໃນໜ້າທີ່ ເພື່ອຄ້ຳປະກັນໃຫ້ຜູ້ອື່ນກູ້ຢືມ ນຳທະນາຄານ ຫລື ສະຖາບັນ ການເງິນອື່ນໆຂອງຕົນ.

ຍົກເວັ້ນບາງກໍລະນີ ດັ່ງລຸ່ມນີ້:

(1) ໃຫ້ກູ້ຢືມ ເພື່ອສ້າງທີ່ພັກອາໃສຕົ້ນຕໍ ຂອງຜູ້ກ່ຽວໄດ້ 1 ແຫ່ງ (ແຕ່ຜູ້ກ່ຽວ ບໍ່ມີສິດເອົາໄປ ຈຳນອງ ຫລື ຂາຍ ເພື່ອຈຸດປະສົງຢ່າງອື່ນ),
(2) ໃຫ້ກູ້ຢືມ ເປັນທຶນການສຶກສາ ແກ່ລູກຂອງຜູ້ກ່ຽວ.

**ມາດຕາ 2.** ທະນາຄານທຸລະກິດ ຫລືສະຖາບັນການເງິນຈະໃຫ້ກູ້ຢືມແກ່ລະດັບຜູ້ບໍລິຫານດັ່ງກ່າວນັ້ນໄດ້ ກໍຕໍ່ເມື່ອ ໄດ້ຮັບການເຫັນດີ ຈາກທະນາຄານ ແຫ່ງ ສປປ ລາວ ແລະ ການອະນຸຍາດຈາກ

ສະພາບໍລິຫານ ຂອງ ທະນາຄານທຸລະກິດ ຫລື ສະຖາບັນການເງິນ ທີ່ກ່ຽວຂ້ອງ ໂດຍບໍ່ໃສ່ຄະແນນສຽງສ່ວນຫລາຍ ຂອງ ສະມາຊິກສະພາບໍລິຫານ ໃນທະນາຄານທຸລະກິດ ຫລື ສະຖາບັນການເງິນດັ່ງກ່າວ. ຜູ້ສະເຫນີຂໍກູ້ຢືມເງິນ ບໍ່ມີສິດລົງຄະແນນສຽງ.

ມາດຕາ 3. ການອະນຸມັດໃນການປ່ອຍເງິນກູ້

(1) ການປ່ອຍເງິນກູ້ໃຫ້ແກ່ເປົ້າຫມາຍ ທີ່ກ່າວມາຂ້າງເທິງນັ້ນ ຕ້ອງປະຕິບັດພາຍຫລັງໃຫ້ບູລິມະສິດແກ່ລູກຄ້າເງິນກູ້ຢືມ ປະເພດດຽວກັນ.

(2) ເງື່ອນໄຂການໃຫ້ກູ້ຢືມ ແມ່ນໃຫ້ປະຕິບັດຄືກັນ ກັບລູກຄ້າທົ່ວໄປ,

(3) ທະນາຄານທຸລະກິດ ຫລືສະຖາບັນການເງິນ ຕ້ອງຮຽກຮ້ອງໃຫ້ຜູ້ກູ້ຢືມ ສົ່ງເງິນຄືນໃຫ້ຕົນໄດ້ທຸກເວລາ, ໃນເມື່ອຮູ້ວ່າຜູ້ກ່ຽວ ຫາກຕິດຫນີ້ຜູ້ອື່ນ ດ້ວຍຈຳນວນເງິນເທົ່າກັບ ຫລື ສູງກວ່າ ຈຳນວນຫນີ້ ທີ່ກູ້ຢືມນຳທະນາຄານທຸລະກິດ ຫລື ສະຖາບັນການເງິນ ທີ່ຕົນສັງກັດ,

(4) ຜູ້ກູ້ຢືມຕ້ອງສະຫລຸບລາຍງານ ເປັນລາຍລັກອັກສອນ ແກ່ສະພາບໍລິຫານ ຂອງຕົນຊາບກ່ຽວກັບສະພາບການນຳໃຊ້ເງິນກູ້, ຫລັກຊັບຄ້ຳປະກັນ ແລະ ອື່ນໆ (ລວມທັງຈຳນວນເງິນກູ້ທີ່ຍັງບໍ່ທັນໄດ້ນຳໃຊ້),

(5) ທຸກໆຄັ້ງທີ່ມີການປ່ຽນແປງໃຫຍ່ສຳຄັນ ທີ່ພົວພັນກັບແຫລ່ງເງິນກູ້ຢືມດັ່ງກ່າວ, ຜູ້ກ່ຽວຕ້ອງລາຍງານໃຫ້ສະພາບໍລິຫານ ທີ່ຕົນສັງກັດຢູ່ ຮັບຊາບ.

ມາດຕາ 4. ທະນາຄານທຸລະກິດ ຫລື ສະຖາບັນການເງິນ ແລະ ສາຂາຂອງຕົນ ສາມາດປ່ອຍເງິນກູ້ ຫລື ຊື້ຮຸ້ນສ່ວນຈາກບໍລິສັດເຄືອຄ່າຍໄດ້ ໃນຂອບເຂດບໍ່ເກີນ 10% ສຳລັບສາຂາດຽວ ແລະ ສູງສຸດເກີນ 20% ສຳລັບຫລາຍເຄືອຄ່າຍ ຮວມເຂົ້າກັນ ຂອງຄັງແຮເພື່ອຄວາມສ່ຽງ ຂອງ ທະນາຄານທຸລະກິດ ຫລື ສະຖາບັນການເງິນທີ່ກ່ຽວຂ້ອງ. ທຸກໆການຊຳລະສະສາງ ກັບບໍລິສັດດັ່ງກ່າວນີ້ ຕ້ອງປະຕິບັດຕາມຫລັກການ ຂອງທະນາຄານ.

ມາດຕາ 5. ຂໍ້ກຳນົດສະບັບນີ້ ມີຜົນບັງຄັບໃຊ້ ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.

ວຽງຈັນ, ວັນທີ 16 ມັງກອນ 1996.

ວ່າການແທນຜູ້ວ່າການທະນາຄານ ແຫ່ງ ສປປ ລາວ.

ປານີ ຢາທໍ່ຕູ້